ຂັ້ນຕອນການຜະລິດລູກປານິນໃນກະຊັງ

19

1 ການເລືອກສະຖານທີ່

- ສະຖານທີ່ຄວນຢູ່ໃກ້ໝູ່ບ້ານ ແລະ ເຮືອນຄົນ, ເພື່ອສະດວກໃນການບໍລະບັດຮັກສາ.
- ສະຖານທີ່ຄວນມີພື້ນທີ່ໃນການຂຸດໜອງ ຂະໜາດ 20 x 20 ແມັດ ຂຶ້ນໄປ.
- ສະຖານທີ່ຢູ່ໃກ້ແຫຼ່ງນ້ຳເຊັ່ນ: ແມ່ນ້ຳ, ຫ້ວຍ, ອ່າງເກັບນ້ຳ, ລະບົບນ້ຳລິນ ແລະ ຊົນລະປະທານ ເພື່ອນຳໃຊ້ນ້ຳເຂົ້າໃນການຜະລິດລູກປາໄດ້ຕະຫຼອດປີ.
- ການຜະລິດລູກປາຕ້ອງມີສອງໜອງຂຶ້ນໄປເພື່ອເອົາໃຊ້ໃນການລ້ຽງປາພໍ່ແມ່ພັນ ແລະ ໜອງອະນຸບານລູກປາ.

2 ການກະກຽມໜອງ ແລະ ກະຊັງຜະລິດລູກປາ

2.1 ການກະກຽມໜອງຂຸດໃໝ່

- ຫຼັງຈາກຂຸດໜອງໃໝ່ແລ້ວເອົາປຸນຂາວໃສ່ໃນອັດຕາ 15 ຫາ 20 ກຼາມ/1ມ^2, ຖ້າໜອງຂະໜາດ 10 x 20 ແມັດ (200 ມ^2) ຄວນໃສ່ປຸນຂາວ 3 ກິໂລກຼາມ.
- ຫວ່ານຝຸ່ນຄອກ (ຂີ້ງົວ ຫຼື ຂີ້ຄວາຍ) ໃນອັດຕາ 300 ກິໂລກຼາມ/ໄຮ່ ຫຼື 35 ກິໂລກຼາມ/200ມ^2 ແລ້ວເອົານ້ຳໃສ່ໃຫ້ໄດ້ລະດັບ 1 ແມັດ.

2.2 ການກະກຽມໜອງເກົ່າ

- ດູດນ້ຳອອກໃຫ້ແຫ້ງ ແລະ ຕາກໜອງໄວ້ ປະມານ 2 ອາທິດ.
- ອະນາໄມພື້ນໜອງ ແລະ ປັບປຸງຄັນຄູ.
- ຫວ່ານປຸນຂາວໃຫ້ທົ່ວໜອງໃນອັດຕາ 20 ກຼາມ/ມ^2
- ໃສ່ຝຸ່ນຄອກໃຫ້ທົ່ວພື້ນໜອງ.
- ເອົານ້ຳເຂົ້າໜອງໃຫ້ໄດ້ລະດັບ 1 ຫາ 1.5 ແມັດ.
- ສ້າງອາຫານທຳມະຊາດ (ສ້າງນ້ຳຂຽວ).

2.3 ການກະກຽມກະຊັງ

- ກະຊັງໃນການລ້ຽງປາພໍ່ແມ່ພັນແມ່ນ 4 x 4 ແມັດ.
- ກະຊັງອະນຸບານລູກປາຂະໜາດ 2 x 3 ແມັດ.
- ຫຼັກກະຊັງຄວາມຍາວ 3 ແມັດ.
- ເຊືອກໃຫຍ່ ແລະ ເຊືອກນ້ອຍເພື່ອມັດກະຊັງ.
- ຮ້ອຍເຊືອກຂຽວມັດໃສ່ຫູກະຊັງໂດຍຮອບ.
- ຄວນປັກຫຼັກກະຊັງໃຫ້ແໜ້ນ, ມັດກະຊັງກັບຫຼັກໃຫ້ແໜ້ນ ໂດຍມັດຫູກະຊັງທັງໝົດຕິດກັບຫຼັກ ແລະ ຖ່ວງກ້ອນຫີນໃສ່ພື້ນກະຊັງເພື່ອບໍ່ໃຫ້ກະຊັງຟຸຂຶ້ນໜ້ານ້ຳ.

3 ອຸປະກອນທີ່ໃຊ້ໃນການຜະລິດລູກປາ

- ກະຊັງພໍ່ແມ່ພັນຂະໜາດ 4 x 4 ແມັດ.
- ກະຊັງອະນຸບານລູກປາ 2 x 3 ແມັດ.
- ໄມ້ກົມເພື່ອກາງກະຊັງ.
- ຄຸ ແລະ ຊາມ.
- ກະຕ່ອງຈັບປາພໍ່ແມ່ພັນ ແລະ ກະຕ່ອງຈັບປານ້ອຍ.
- ກະຕ່ອງຄັດຂະໜາດລູກປາ.
- ຊິ່ງຊັ່ງນ້ຳໜັກ.
- ຖົງມືຈັບປາພໍ່ແມ່ພັນ.
- ປຸນຂາວ ແລະ ຝຸ່ນຄອກ.

4 ການຄັດເລືອກປາພໍ່ແມ່ພັນ ແລະ ອັດຕາການປ່ອຍ

- ລັກສະນະປາເພດຜູ້ຈະມີຂະໜາດໃຫຍ່ກ່ວາປາເພດແມ່ (ປາໃນລຸ້ນດຽວກັນ).
- ປາເພດຜູ້ຈະມີສີເຂັ້ມກວ່າປາແມ່ ອັດຕາການປ່ອຍພໍ່ແມ່ພັນແມ່ນ 1 ຕໍ່ 2 (ປາພໍ່ 1 ໂຕ/ປາແມ່ 2 ໂຕ).
- ການປ່ອຍປາພໍ່ແມ່ພັນໃນກະຊັງຂະໜາດ 4 x 4 ແມັດ, ຈະປ່ອຍປາ 60 ໂຕ, ໃນນັ້ນ ພໍ່ພັນ 20 ໂຕ ແລະ ແມ່ພັນ 40 ໂຕ.





5 ການໃຫ້ອາຫານປາພໍ່ແມ່ພັນ

- ໃຫ້ອາຫານປາສຳເລັດຮູບທີ່ມີທາດໂປຼຕີນ 35 ເປີເຊັນ ແລະ ໃຫ້ອັດຕາ 3 ເປີເຊັນຂອງນ້ຳໜັກປາຕໍ່ວັນ.
- ນອກຈາກອາຫານສຳເລັດຮູບແລ້ວຄວນໃຫ້ອາຫານທີ່ຫາໄດ້ຕາມທ້ອງຖິ່ນເຊັ່ນ: ຮຳ, ເຂົ້າປຽນ ແລະ ສາລີບົດ.
- ເວລາໃຫ້ອາຫານປາພໍ່ແມ່ພັນຄວນໃຫ້ສອງຄັ້ງ (ຕອນເຊົ້າ ແລະ ຕອນແລງ) ທຸກໆວັນເພື່ອເຮັດໃຫ້ປາແມ່ພັນໃຫ້ໄຂ່ເປັນປົກກະຕິດີ.
- ໜອງປາທີ່ລ້ຽງປາພໍ່ແມ່ພັນຕ້ອງໃສ່ຝຸ່ນຄອກສະໝ່ຳສະເໝີ (ຂີ້ຄວາຍ ຫຼື ຂີ້ງົວ) ເພື່ອເຮັດໃຫ້ນ້ຳເກີດມີອາຫານທຳມະຊາດ.
- ການໃຫ້ອາຫານປາພໍ່ແມ່ພັນແມ່ນບໍ່ໃຫ້ຫຼາຍ, ເພາະຈະເຮັດໃຫ້ປາພໍ່ແມ່ພັນຕຸ້ຍຫຼາຍ ແລະ ສິ່ງຜົນກະທົບໃນການຜະລິດລູກປາ.
- ຖ້າການໃຫ້ອາຫານປາບໍ່ພຽງພໍ ປາພໍ່ແມ່ພັນກໍ່ບໍ່ໃຫ້ໄຂ່ສະໝ່ຳສະເໝີ ແລະ ໄຂ່ປາທີ່ໄດ້ມາກໍ່ບໍ່ສົມບູນ.

6 ການເກັບລູກປາໃນກະຊັງ ແລະ ອານຸບານລູກປາໃນກະຊັງ

6.1 ການເກັບລູກປາໃນກະຊັງ

- ການເກັບລູກປານ້ອຍອອກຈາກກະຊັງແມ່ນຈະໄດ້ປະຕິບັດທຸກໆ 2 ອາທິດ/ຄັ້ງ.
- ກະຊັງປາພໍ່ແມ່ພັນ 1 ກະຊັງສາມາດເກັບລູກປາໜຶ່ງຄັ້ງໄດ້ປະມານ 2,500 ຫາ 3,000 ໂຕ.

6.2 ການກະກຽມໜອງເກົ່າ

- ການເກັບລູກປານ້ອຍອອກຈາກກະຊັງແມ່ນຈະໄດ້ກະຊັງອະນຸບານຂະໜາດ 2 x 3 ແມັດ ຈະອະນຸບານລູກປາ 3,000 ຫາ 5,000 ໂຕ.
- ອາຫານອະນຸບານລູກປາໃຫ້ອາຫານຝຸ່ນທີ່ມີໂປຼຕີນ 45 ເປີເຊັນ ໂດຍຫວ່ານກະຈ່າຍທົ່ວກະຊັງໃນອັດຕາການ 15 ເປີເຊັນ /ນ້ຳໜັກປາ/ວັນ.
- ການໃຫ້ອາຫານ 2 ຫາ 3 ຄັ້ງ/ວັນ ແລະ ປານ້ອຍຄວນກິນອາຫານໝົດພາຍໃນ 15 ຫາ 20 ນາທີ, ຖ້າປາກິນອາຫານໝົດໄວຄັ້ງຕໍ່ໄປຄວນໃຫ້ອາຫານເພີ້ມ. ການອະນຸບານລູກປາໄດ້ອາຍຸ 45 ວັນ. ສາມາດນຳໄດ້ລ້ຽງ ຫຼື ຈຳໜ່າຍໄດ້.

NAFRI

DTFAP

AGRICULTURE FOR NUTRITION PROJECT

IFAD
Investing in rural people

โครงการกสิกำ เพื่อโพชะนาการ

ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສ ປປ ລາວ.
Phonexay village, Saysettha district, Vientiane Capital, Lao PDR.
ໂທ: +856 20 416 556
Fax: +856 20 416 556
E-mail : ssfsn.project@gmail.com
ເວັບໄຊ: www.afn.gov.la